# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດທີ 13 ພຶສຈິກາ 2016 (11-13-2016)

---

## ຄວາມກ້າຫານທີ່ບໍ່ສາມາດຢັບຢັ້ງໄດ້

**ຈຸດສຳຄັນໃນບົດຮຽນ**: ພຣະເຈົ້າໃຫ້ເຮົາມີຄວາມກ້າຫານທີ່ຈະກ່າວພຣະຄຳຢ່າງບໍ່ຢ້ານສຳລັບພຣະຄຣິດ.

**ພຣະຄັມພີໃນບົດຮຽນ**: ກິຈການ 4:1-3, 8-12, 19-20

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ສ່ວນຫຼາຍພວກເຮົາຖືກສອນແຕ່ຍັງນ້ອຍວ່າ "ໃຫ້ຄິດກ່ອນຈຶ່ງເວົ້າ." ເຖິງຢ່າງໃດກໍຕາມ ບາງເທື່ອພວກເຮົາກໍຕ້ອງໄດ້ເວົ້າເຖິງແມ່ນເຮົາແລ້ວຮູ້ວ່າຄຳເວົ້າຂອງເຮົາຈະເຮັດໃຫ້ເຮົາມີບັນຫາ. ເຮົາຕ້ອງມີຄວາມກ້າຫານ.

ຈົ່ງພິຈາຣະນາເບິ່ງ ມັດທິວ ອາຢາຍກາ. ຂ່າວຍ້ອນຫຼັງໃນປີ 2015 ເມື່ອຊາຍ 21 ຄົນຈາກປະເທດເອຢິບຖືກລັກພາຕົວໄປແລະຖືກຕັດຄໍເພາະເຂົາເຈົ້າມີຄວາມເຊື່ອໃນພຣະເຢຊູຄຣິດ. ມັດທິວແມ່ນຄົນນຶ່ງໃນຄົນເຫຼົ່ານັ້ນທີ່ຖືກລັກພາຕົວໄປ ແຕ່ກັບເປັນວ່າລາວບໍ່ແມ່ນຄົນເອຢິບຫລືບໍ່ແມ່ນຄຣິສຕຽນ. ລາວພຽງແຕ່ທຳງານໃນລິບເບັງຮ່ວມກັນຊາຍ 20 ຄົນເທົ່ານັ້ນ.

ຢ່າງໃດກໍຕາມການປ່ຽນແປງຢ່າງນຶ່ງໄດ້ເກີດຂຶ້ນ, ໃນວັນແຫ່ງຊາຕາກັມອັນໂຫດຮ້າຍນັ້ນ. ເຂົາເຈົ້າໄດ້ຄຸເຂົ່າລົງທີ່ຫາດຊາຍໂດຍເພັຊຄາດຢືນຢູ່ທາງຫຼັງ. ແຕ່ລະຄົນໄດ້ຖືກບັງຄັບໃຫ້ປະຕິເສດຄວາມເຊື່ອຂອງເຂົາເຈົ້າ. ແຕ່ລະຄົນຕາຍຍ້ອນຮັບວ່າຕົນເຊື່ອໃນອົງພຣະເຢຊູຄຣິດ. ເມື່ອເພັຊຄາດອວ່າຍມາຫາມັດທິວແລະອອກຄຳສັ່ງຢ່າງດຽວກັນ, ລາວເວົ້າວ່າ, "ພຣະເຈົ້າຂອງເຂົາເຈົ້າກໍແມ່ນພຣະເຈົ້າຂອງຂ້ອຍ" !

ຄວາມກ້າຫານທີ່ບໍ່ສາມາດຢັບຢັ້ງໄດ້. ພວກເຮົາໄດ້ເຫັນເປໂຕແລະໂຢຮັນຢູ່ໃນພຣະທັມກິຈການບົດທີ 4, ແລະຄວາມກ້າຫານທີ່ບໍ່ສາມາດຢັບຢັ້ງໄດ້ນີ້ໄດ້ສືບທອດຕໍ່ເນື່ອງມາເຖິງຄົນອື່ນເຊັ່ນ ມັດທິວ ອາຢາຍກາ.

### ສຶກສາພຣະຄັມພີ

**<u>ໂອ້ລົມສົນທະນາ</u>**: ແລກປ່ຽນຄວາມຄິດເຫັນໃນຄຳຖາມທີ່ວ່າ, *"ແມ່ນຫຍັງຄືຄວາມກ້າຫານຫລາຍທີ່ສຸດ ທີ່ທ່ານເຄີຍເຫັນມາ?"*

**<u>ນຳພາ</u>**: ນຳພານັກຮຽນເພື່ອສຶກສາເບິ່ງ **"ພຣະຄັມພີຕອບສນອງຕໍ່ຊີວິດ"** ໂດຍເນັ້ນໜັກ**ໃສ່** **"ຄວາມກ້າຫານທີ່ບໍ່ສາມາດຢັບຢັ້ງໄດ້"** ໂດຍອ່ານຫລືເວົ້າສລຸບຖ້ອຍຄຳໃນຕອນນີ້ຫລືໜູນໃຈໃຫ້ນັກຮຽນອ່ານດ້ວຍຕົນເອງ.

**<u>ນຳພາ</u>**: ຄຣູເວົ້າລົ້ມຄືນ **"ຈຸດສຳຄັນ"** ຢູ່ຂ້າງເທິງໜ້າທຳອິດທີ່ວ່າ, **"ພຣະເຈົ້າໃຫ້ເຮົາມີຄວາມກ້າຫານທີ່ຈະກ່າວພຣະຄຳຢ່າງບໍ່ຢ້ານສຳລັບພຣະຄຣິດ."**

**1. ກິຈການ 4:1-3:**

**ອ່ານພຣະຄຳ**: ໃຫ້ນັກຮຽນຄົນນຶ່ງອາສາສມັກອ່ານພຣະທັມກິຈການ 4:1-3

**ນຳພາ**: ນຳພານັກຮຽນສຶກສາຖ້ອຍຄຳຕອນນຶ່ງທີ່ສຳຄັນຂ້າງລຸ່ມນີ້ ຊຶ່ງເປໂຕແລະໂຢຮັນ ພົບກັບການຕໍ່ຕ້ານ;

ການຕໍ່ຕ້ານທີ່ເປໂຕແລະໂຢຮັນປະເຊີນເປັນການສະແດງຄວາມກ້າຫານຂອງພວກເພິ່ນ. ຄວາມກ້າຫານເປັນເໝືອນເພັດຢູ່ເທິງຜ້າກຳມະຍີ່ສີດຳ, ມັນສິ່ງແສງສະທ້ອນຕອບໂຕ້ຄວາມມືດຂອງສະຖານະການ. ຄວາມກ້າຫານມີສ່ວນກັບການປະເຊີນໜ້າແລະໃນຄວາມທົນທຸກທໍຣະມານທີ່ອາດຈະເກີດຂຶ້ນ. ຄວາມກ້າຫານແມ່ນການຢືນຂຶ້ນເພື່ອພຣະຄຣິດ ເມື່ອທ່ານຮູ້ແລ້ວວ່າທ່ານຈະຕ້ອງມີການສູນເສັຽ(ຈ່າຍຄ່າ)ໃນການເຮັດເຊັ່ນນັ້ນ.

**ໂອ້ລົມສົນທະນາ**: ແລກປ່ຽນຄວາມຄິດເຫັນໃນຄຳຖາມທີ່ວ່າ ***"ແມ່ນຫຍັງຄືຄວາມສ່ຽງທີ່ເຮົາຕ້ອງປະເຊີນ ເມື່ອເຮົາປະກາດຂ່າວປະເສີດ?"***

**2. ກິຈການ 4:8-12:**

**ອ່ານພຣະຄຳ**: ໃຫ້ນັກຮຽນຄົນນຶ່ງອາສາສມັກອ່ານພຣະທັມກິຈການ 4:8-12

**ໂອ້ລົມສົນທະນາ**: ແລກປ່ຽນຄວາມຄິດເຫັນໃນຖ້ອຍຄຳທີ່ວ່າ, ***" ໃນວັທນະທັມທີ່ໃຫ້ຄຸນຄ່າ 'ການຍອມຮັບທຸກຢ່າງ' ເພື່ອສິ່ງອື່ນໆ ເຮົາຈະມີໃຈກ້າໂອ້ລົມດ້ວຍຄວາມຮັກຢ່າງໃດ ໂດຍໃຊ້ພຣະຄຳຂໍ້ທີ 12 ໃນຕອນນີ້ຂອງບົດຮຽນ?"***

**ນຳພາ**: ນຳພານັກຮຽນສຶກສາຖ້ອຍຄຳຕອນນີ້ ໃຫ້ຄົນນຶ່ງອາສາອ່ານດັງໆ ຕາມຂ້າງລຸ່ມນີ້

ຜູ້ນຳທາງສາສນາຢິວໄດ້ຖາມຄຳຖາມນຶ່ງຕໍ່ເປໂຕແລະໂຢຮັນ: " ໂດຍຣິດອັນໃດຫລືໂດຍນາມຊື່ຜູ້ໃດທີ່ພວກທ່ານເຮັດການນີ້?" (ຂໍ້ 7 ) ພວກເຂົາຕ້ອງການຮູ້ວ່າຊາຍງ່ອຍຄົນນັ້ນຫາຍດີໄດ້ຢ່າງໃດ.

**ໂອ້ລົມສົນທະນາ**: ແລກປ່ຽນຄວາມຄິດເຫັນໃນຖ້ອຍຄຳທີ່ວ່າ, ***" ທ່ານຈະອະທິບາຍ ວຽກງານຂອງພຣະວິນຍານບໍຣິສຸດ ຢ່າງໃດ ໃນການປະກາດຂ່າວປະເສີດ?"***

**3. ກິຈການ 4:19-20:**

**ອ່ານພຣະຄຳ**: ໃຫ້ນັກຮຽນຄົນນຶ່ງອາສາສມັກອ່ານພຣະທັມກິຈການ 4:19-20

**ນຳພາ**: ນຳພານັກຮຽນສຶກສາຫົວຂໍ້ທີ່ສຳຄັນຂ້າງລຸ່ມນີ້;

1. ບາງຄົນບໍ່ສາມາດຍອມຮັບວ່າຕົນເອງຜິດ. ມີຄົນງ່ອຍຄົນນຶ່ງຢືນຂຶ້ນດ້ວຍຂາສອງຂ້າງທີ່ແຂງແຮງຕໍ່ໜ້າຜູ້ນຳທາງສາສນາ. ເຂົາເຫັນການອັສຈັນ, ແຕ່ຈິດໃຈຂອງພວກເຂົາຍັງແຂງກະດ້າງຢູ່.
2. ຄຣິສຕຽນທຸກວັນນີ້ມີຄວາມຈຳເປັນທີ່ອ່ອນແອ ເພື່ອຢາກເຮັດໃຫ້ຄົນອື່ນມັກແລະເຫັນດີນຳ. ຫຼາຍຕໍ່ຫຼາຍຄັ້ງພວກເຮົາເປັນເໝືອນປ້າຍທີ່ອ່ານວ່າ: "ຂ້າພະເຈົ້າເປັນຜູ້ເຮັດໃຫ້ຄົນເພິ່ງພໍໃຈ, ເຫັນດີນຳຂ້າພະເຈົ້າບໍ?"
3. ຄວາມເຫັນດ້ວຍຂອງພຣະເຈົ້າແມ່ນສຳຄັນທັງໝົດ. ຄວາມຄິດເຫັນຂອງຄົນອື່ນຈະເຂົ້າມາແລະອອກໄປ, ແຕ່ຄວາມຮັກຂອງພຣະເຈົ້າບໍ່ເຄີຍປ່ຽນແປງແລະບໍ່ມີເງື່ອນໄຂ.

__ໂອ້ລົມສົນທະນາ__: ແລກປ່ຽນຄວາມຄິດເຫັນໃນຖ້ອຍຄຳທີ່ວ່າ, ***"ຢູ່ບ່ອນໃດ ທີ່ພຣະເຈົ້າຊົງນຳພາກຸ່ມຂອງທ່ານໃຫ້ສະແດງຄວາມກ້າຫານຫລາຍຂຶ້ນກວ່າເກົ່າ?"***

__ນຳພາ__: ຄຣູເວົ້າລົ້ມຄືນ "**ຈຸດສຳຄັນ**" ຢູ່ຂ້າງເທິງໜ້າທຳອິດທີ່ວ່າ **"ພຣະເຈົ້າໃຫ້ເຮົາມີຄວາມກ້າຫານທີ່ຈະກ່າວພຣະຄຳຢ່າງບໍ່ຢ້ານສຳລັບພຣະຄຣິດ."** ຖ້າມີເວລາພໍ ໜູນໃຈນັກຮຽນໃຫ້ແບ່ງປັນຄວາມຄິດເຫັນ ຫລືຖາມຄຳຖາມສຸດທ້າຍ.

## ນຳໃຊ້ໃນຊີວິດ

ທ່ານຈະສະແດງຄວາມກ້າຫານຂອງທ່ານຢ່າງໃດໃນອາທິດນີ້ ໃນຖານະເປັນຜູ້ຕິດຕາມອົງພຣະເຢຊູຄຣິດ? ຈົ່ງພິຈາຣະນາເບິ່ງຄຳແນະນຳນີ້.

- ❖ ***ທຳໃຫ້ພຣະເຈົ້າພໍພຣະທັຍ.*** ເວລາຊ່ວງສຸດທ້າຍຂອງແຕ່ລະມື້, ຈົ່ງປະເມີນຜົນການປະພຶດແລະອຸປະນິສັຍຂອງທ່ານໂດຍການຕອບຄຳຖາມນີ້. " ຂ້າພະເຈົ້າໄດ້ໃຊ້ຊີວິດເພື່ອໃຫ້ເປັນທີ່ພໍໃຈຂອງຜູ້ໃດໃນມື້ນີ້?" ຈົ່ງປະພຶດຕົນໃຫ້ເປັນທີ່ພໍພຣະທັຍພຣະເຈົ້າ ແທນທີ່ຈະໃຫ້ເປັນທີ່ພໍໃຈມະນຸດ.

- ❖ **ຈົ່ງເອົາໃຈໃສ່ໃນການອ່ານ.** ຂໍ້ມູນເປັນອົງປະກອບທີ່ສຳຄັນຕໍ່ຄວາມກ້າຫານ. ເພື່ອໃຫ້ເຂົ້າໃຈຄັກວ່າເປັນດ້ວຍເຫດໃດພຣະເຢຊູຈຶ່ງເປັນພຽງທາງດຽວໄປເຖິງສວັນ. ອ່ານເຣື່ອງພຣະເຢຊູນອກຈາກພຣະອື່ນໆ: ການກ່າວອ້າງອັນແນ່ນອນຂອງຄຣິສຕຽນທີ່ຂຽນໂດຍ ຣໍວີ ແຊກຂາຣີຢາ (ທີ່ພິມອອກໃນປີ 2002)

- ❖ **ລົງມືປະຕິບັດ.** ຈົ່ງຄົ້ນຄວ້າແລະຫາສະຖານທີ່ໃນຊຸມຊົນຂອງທ່ານ ຫຼືຣັດທີ່ຂ່າວປະເສີດຍັງບໍ່ໄດ້ປະກາດ. ຈົ່ງເລີ້ມຕົ້ນປ່ຽນແປງນະໂຍບາຍນັ້ນ:ຂຽນຈົດໝາຍເຖິງຫ້ອງການຄະນະຣັຖບານ, ເຂົ້າປະຊຸມຮ່ວມກັບສາທາຣະນະຊົນແລະເວົ້າອອກໃນຄວາມຄິດເຫັນຂອງທ່ານ, ເຂົ້າຮ່ວມກຸ່ມທີ່ທຳງານປ່ຽນສິ່ງທີ່ຜິດໃຫ້ເປັນທີ່ຖືກຕ້ອງ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນwww.lsbf.orgແປໂດຍ ພສ**